# ພໍ່ແມ່ກໍນັບຄືກັນ

## ຊ່ວຍລູກທ່ານໃນເຣື່ອງ ການຄິດເລກໃນໃຈ

ການຄິດເລກສ່ວນໃຫຍ່ທີ່ພວກເຮົາເຮັດໃນແຕ່ລະມື້ນັ້ນ ພວກເຮົາເຮັດຢູ່ໃນຫົວຂອງເຮົາ. ການຄິດໄລ່ບາງຢ່າງພວດເຮົາກໍຄິດຢາກຈະຢື້ໄປຫາເຈັ້ຍແລະສໍ ຫຼື ເຄື່ອງຄິດເລກ. ແຕ່ວ່າ ເວລາທີ່ພວກເຮົາຫຼິ້ນເກມ ໝາກດາຕ ຫຼື ຫຼິ້ນໄພ້ ຫຼືແມ່ນແຕ່ການເບິ່ງເກມຫຼິ້ນບານ ພວກເຮົາກໍ ອາໃສການຄິດໄລ່ຢູ່ໃນໃຈເປັນສ່ວນຫຼາຍ. ຈະຕ້ອງໄດ້ຈັກຄະແນນຈຶ່ງຈະຊນະ ຈະຕ້ອງເຕະເຂົ້າປະຕູຈັກເທື່ອຈຶ່ງຈະເຮັດໃຫ້ພວກເຮົານໍາໜ້າ ແລະ ມີ ເວລາພໍບໍ?

ການເດີນທາງ ການມີໃບບິລເກັບເງິນຮ່ວມກັນ ການໄປຊື້ຂອງ ການ ຫຼິ້ນ ຫຼື ການເບິ່ງກິລາ ແລະການກະກຽມອາຫານ ໝົດທຸກຢ່າງນີ້ ພົວພັນກັບການຄິດໄລ່ໃນໃຈທັງນັ້ນ. ວິທີທີ່ພວກເຮົາໃຊ້ໃນເວລາທີ່ພວກເຮົາຄິດຢູ່ໃນຫົວເຮົານັ້ນ ສ່ວນຫຼາຍບໍ່ຄືກັນກັບວິທີທີ່ພວກເຮົາ ໃຊ້ໃນເວລາທີ່ເຮົາຂຽນຈໍານວນລົງໃສ່ເຈັ້ຍ.

ວິທີການຂັ້ນຕອນພົວພັນກັບການຄິດໄລ່ຢູ່ໃນໃຈນັ້ນຍັງເປັນສິ່ງທີ່ບໍ່ສາມາດອະທິບາຍໄດ້ສໍາລັບເດັກຫຼາຍຄົນ ແລະ ແມ່ນແຕ່ສໍາລັບຜູ້ ໃຫຍ່ຫຼາຍຄົນຄືກັນ. ການຄິດໄລ່ 998 x 3 ແມ່ນເຣື່ອງຍາກ, ແມ່ນແຕ່ໃຫ້ໃຊ້ເຈັ້ຍແລະສໍ, ຖ້າທ່ານບໍ່ຮູ້ວ່າ ທ່ານສາມາດຫາຄໍາ ຕອບໄດ້ຈາກການຄິດໄລ່ໃນໃຈດ້ວຍການເອົາເລກ 6 ລົບອອກຈາກ 3000.

## ດັ່ງນັ້ນ ພວກເດັກນ້ອຍຮຽນການຄິດໄລ່ໃນໃຈໄດ້ຢ່າງໃດ?

ເດັກນ້ອຍເລີ້ມນັບສິ່ງຂອງທີ່ພວກເຂົາສາມາດເຫັນ ແລະ ໃຊ້ວັດຖຸ ເພື່ອບວກແລະລົບ. ໂດຍຜ່ານການຝຶກຊ້ອມ ພວກເດັກນ້ອຍຈະເລີ້ມຄິດເຖິງ ວິທີບວກ ແລະ ລົບໂດຍບໍ່ໃຊ້ວັດຖຸ. ນຶ່ງໃນວິທີຕ່າງໆໃນຕອນຕົ້ນທີ່ພວກເດັກນ້ອຍຮຽນບວກເລກສອງຕົວຢູ່ໃນໃຈແມ່ນເປັນການເລີ້ມ ດ້ວຍເລກໃຫຍ່ຂຶ້ນ ແລະ ນັບໄປເທື່ອລະຕົວເພື່ອບວກເລກຕົວທີສອງ. ອັນນີ້ແມ່ນວິທີທີ່ດີໃນເວລາບວກເລກຕົວນ້ອຍ. ໃນເມື່ອເວລາເດັກນ້ອຍເລີ້ມເຮັດກັບເລກຕົວໃຫຍ່ຂຶ້ນ ພວກເຂົາກໍຈະພັທນາຫຼາຍ ວິທີແທນທີ່ທີ່ຈະນັບເທື່ອລະຕົວ.

ຕົວຢ່າງເຊັ່ນ ເພື່ອຊອກຫາຄໍາຕອບຂອງ 25 + 89 ພວກເດັກນ້ອຍ ສາມາດ:

- ເຮັດໃຫ້ 89 ຂຶ້ນໄປເປັນ 90 ແລ້ວບວກ 10 ແລ້ວ 14
- ບວກ 20 ແລະ 80 ເພື່ອໃຫ້ເປັນ 100 ແລ້ວບວກ 9 ແລະ 5 ແລ້ວ ບວກ 100 ແລະ 14
- ບວກ 10 ສອງເທື່ອໃສ່ 89 ແລ້ວບວກ 5 ຕື່ມເຂົ້າໄປ

ສິ່ງນຶ່ງຂອງການຄິດໄລ່ໃນໃຈທີ່ເປັນໜ້າສົນໃຈກໍຄື ພວກເຮົາໝົດທຸກ ຄົນບໍ່ໄດ້ຄິດຄືກັນ.

## ທ່ານເຮັດຫຍັງໄດ້ແດ່ຢູ່ບ້ານ?

- ຖາມລູກທ່ານວ່າພວກເຂົາຄິດຫາຄໍາຕອບຕໍ່ຄໍາຖາມຢູ່ໃນໃຈໄດ້ ຢ່າງໃດ. ອະທິບາຍວ່າທ່ານຈະຄິດຫາຄໍາຕອບໃນໃຈຢ່າງໃດ. ຖ້າ ລູກທ່ານບໍ່ສາມາດຄິດຫາຄໍາຕອບໄດ້ໃນໃຈ ເອົາວຸດຖຸໃຫ້ເຂົາໃຊ້ເພື່ອນັບ.

- ຂໍໃຫ້ລູກທ່ານຄິດໄລ່ເບິ່ງວ່າເຂົາຈະໄດ້ເງິນທອນເທົ່າໃດເວລາເຂົາ ຈາຍຄ່າຂອງທີ່ເຂົາຊື້ຢູ່ຮ້ານ.
- ຖ້າລູກທ່ານທ້ອນເງິນເພື່ອຊື້ຂອງສິ່ງນຶ່ງ ຖາມເຂົາວ່າເຂົາຈະຕ້ອງ ທ້ອນເງິນຕື່ມອີກຫຼາຍເທົ່າໃດກ່ອນຈະສາມາດຊື້ຂອງສິ່ງນັ້ນໄດ້.
- ຈົ່ງຊຸກຍູ້ໃຫ້ລູກທ່ານກະເບິ່ງລາຄາຂອງສອງຢ່າງໃນເວລາ ໄປຊື້ຂອງ.
- ໃນເວລາຫຼິ້ນເກມທີ່ໃຊ້ໜ່ວຍໝາກກະລýອກ ຈົ່ງເອົາປ່ຽນເອົາໜ່ວຍ ທີ່ມີຕົວເລກແທນໜ່ວຍມີແຕ້ມຈຸດ.
- ຖ້າຫາກເບິ່ງເກມທີ່ມີສອງທີມຫຼິ້ນນຳກັນ ຂໍໃຫ້ລູກທ່ານຄິດໄລ່ ໃນໃຈຄວາມແຕກຕ່າງຂອງຄະແນນ.
- ຈົ່ງຮວມລູກທ່ານເຂົ້າໃນການຄິດໄລ່ລາຄາຄ່າໃຊ້ຈ່າຍໃນ ການໄປ ທ່ອງທ່ຽວ. ຕົວຢ່າງ ພວກເຮົາຈະພັກຢູ່ຫ້າຄືນ ແລະ ຄ່າ ພັກແມ່ນຄືນລະ $70.

